**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 0691 /ກສ

ນະຄອນຫຼວງວຽງຈັນ, ລົງວັນທີ 19 FEB 2026

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດເນື້ອໃນ
# ແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 1045/ກປມ, ລົງວັນທີ 28 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 0652/ຫກ, ລົງວັນທີ 09 ກຸມພາ 2026.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ເນື້ອໃນແບບພິມຂອງໃບຢັ້ງຢືນການຢັ້ງຢືນການສຳຫຼວດວັດແທກທີ່ດິນ ເພື່ອນຳໃຊ້ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງປະຊາຊົນ, ທີ່ດິນລວມບ້ານ ຫຼື ອົງການຈັດຕັ້ງ ເພື່ອທຳການຜະລິດ, ນຳໃຊ້ເຂົ້າໃນວຽກງານສາທາລະນະປະໂຫຍດຂອງບ້ານ ຫຼື ອົງການຈັດຕັ້ງລັດ ໃນຂອບເຂດປ່າໄມ້ ເພື່ອໃຫ້ປະຊາຊົນ ຫຼື ອົງການຈັດຕັ້ງລັດ ໄດ້ນຳໃຊ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ**

ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ແມ່ນ ເອກະສານບັນທຶກໃນການເກັບກຳຂໍ້ມູນກ່ຽວກັບຕອນດິນ ຊຶ່ງໄດ້ຜ່ານການສຳຫຼວດວັດແທກທີ່ດິນ ຂອງປະຊາຊົນພາຍໃນບ້ານ ຫຼື ອົງການຈັດຕັ້ງລັດ ໂດຍມີການຕົກລົງເຫັນດີ ຈາກອົງການປົກຄອງ ຫຼື ພາກສ່ວນກ່ຽວຂ້ອງ ຕາມລະບຽບການ.

ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ແມ່ນ ເອກະສານທີ່ເປັນຫຼັກຖານຕົ້ນຕໍ ກ່ຽວກັບສິດໃນການນຳໃຊ້ທີ່ດິນ ຊຶ່ງໄດ້ຄັດຕິດສຳນວນເອກະສານ ໃນການຢັ້ງຢືນການຮັບຮູ້ສິດນຳໃຊ້ທີ່ດິນ ໃນຂອບເຂດປ່າໄມ້ ຢ່າງຖືກຕ້ອງ ແລະ ມອບໃຫ້ແກ່ຜູ້ເປັນເຈົ້າຂອງສິດໃນການນຳໃຊ້ທີ່ດິນ ເພື່ອນຳໃຊ້ເປັນຫຼັກຖານຕາມລະບຽບການ.

**ມາດຕາ 5 ການຈັດພິມແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຈັດພິມແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ.

ການພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ໃຫ້ປະຕິບັດຕາມ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ໂດຍນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg) ທີ່ສາມາດເຊື່ອມຕໍ່ກັບຖານຂໍ້ມູນ ພົນລະເມືອງ ແລະ ບັດປະຈຳຕົວ ຂອງກະຊວງປ້ອງກັນຄວາມສະຫງົບ.

## ໝວດທີ 3
## ການພິມເນື້ອໃນລະອຽດໃສ່ແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ

**ມາດຕາ 6 ການພິມເນື້ອໃນລະອຽດໃສ່ແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ**

ການພິມເນື້ອໃນລະອຽດໃສ່ແບບພິມຂອງໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ໂດຍການນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg) ດັ່ງນີ້:

1. **ເລກທີ:** ໃຫ້ພິມຕາມເລກລຳດັບຂອງການອອກໃບຢັ້ງຢືນການສຳຫຼວດວັດແທກທີ່ດິນແຕ່ລະຕອນຕາມດຳລັບ ພາຍໃນບ້ານ;

2. **ທີ່ຕັ້ງຕອນດິນ:** ໃຫ້ພິມຕົວເລກລະຫັດ ແຂວງ, ເມືອງ, ຕາແສງ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່ ໂດຍມີ ເກົ້າ ຕົວເລກ ເຊັ່ນ ສອງ ຕົວເລກທຳອິດ ແມ່ນລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ສາມ ຕົວເລກທາງກາງແມ່ນ ລະຫັດ ເມືອງ, ນະຄອນ ແລະ ສີ່ ຕົວເລກສຸດທ້າຍ ແມ່ນ ລະຫັດ ບ້ານບ່ອນທີ່ດິນຕັ້ງຢູ່;

3. **ອອກໃຫ້ແກ່:** ໃຫ້ພິມຊື່ຂອງອົງການຈັດຕັ້ງ ພັກ-ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ລວມໝູ່ ໃສ່ເລີຍ;

4. **ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້:** ໃຫ້ພິມຕາມຊື່ຂອງຂໍ້ຕົກລົງທີ່ໄດ້ມອບສິດນຳໃຊ້ທີ່ດິນປ່າໄມ້ ໂດຍໃສ່ເລກທີ, ລົງວັນທີຂອງຂໍ້ຕົກລົງດັ່ງກ່າວ;

5. **ປະເພດທີ່ດິນປ່າໄມ້:** ໃຫ້ພິມຊື່ຕາມແຕ່ລະປະເພດທີ່ດິນປ່າໄມ້ ເປັນຕົ້ນ ປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນລະດັບ ແຂວງ, ເມືອງ, ຕາແສງ ແລະ ບ້ານ; ປ່າສະຫງວນແຫ່ງຊາດ, ປ່າສະຫງວນລະດັບ ແຂວງ, ເມືອງ, ຕາແສງ ແລະ ບ້ານ ແລະ ປ່າຜະລິດແຫ່ງຊາດ. ສຳລັບ ເຂດ ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງ ພຽງ, ພູພຽງ ແລະ ພູດອຍ ພ້ອມທັງກຳນົດເຂດດັ່ງກ່າວຢ່າງຈະແຈ້ງ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ;

6. **ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້:** ໃຫ້ພິມຕາມເປົ້າໝາຍຂອງການມອບສິດນຳໃຊ້ທີ່ດິນປ່າໄມ້ ເປັນຕົ້ນ ທີ່ດິນປຸກສ້າງ, ທີ່ດິນນາ, ທີ່ດິນສວນປູກພືດກະສິກຳ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້, ທີ່ດິນໜອງປາ;

7. **ແຜນທີ່ຕາດິນເລກທີ:** ໃຫ້ພິມຂໍ້ມູນຕາມແບບພິມ "ກ 2" ໂດຍນຳໃຊ້ ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg);

8. **ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ:** ໃຫ້ນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg) ດັ່ງນີ້:

   8.1 ຕອນດິນເລກທີ ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

   8.2 ເນື້ອທີ່ດິນ ໃຫ້ພິມຂໍ້ມູນຕາມແບບພິມ "ກ 2" ໂດຍໃຫ້ພິມຫົວໜ່ວຍເປັນຕາແມັດ;

   8.3 ມາດຕາສ່ວນ ໃຫ້ພິມຂໍ້ມູນຕາມແບບພິມ "ກ 2".

9. **ອອກໃຫ້ທີ່:** ໃຫ້ພິມຊື່ ເມືອງ/ນະຄອນ ບ່ອນທີ່ດິນຕັ້ງຢູ່;

10. **ວັນທີ ເດືອນ ປີ:** ໃຫ້ພິມຕາມວັນທີ່ອອກ ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ພາຍຫຼັງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ລົງລາຍເຊັນ. ໃນກໍລະນີ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ມີການມອບສິດໃຫ້ຜູ້ຮອງຮັບຜິດຊອບວຽກງານແທນຊົ່ວຄາວ ກ່ອນເຊັນ ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ໃຫ້ຂຽນ ຄຳວ່າ "ເຊັນແທນ" ຢູ່ທາງໜ້າຕຳແໜ່ງຫົວໜ້າຫ້ອງການ ພ້ອມທັງຂຽນຄຳວ່າ "ຮອງຫົວໜ້າຫ້ອງການ" ໃສ່ລຸ່ມຫົວໜ້າຫ້ອງການ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ກ່ຽວກັບການຢັ້ງຢືນການສຳຫຼວດວັດແທກທີ່ດິນ ຢູ່ ສປປ ລາວ.

## ໝວດທີ 2
## ເນື້ອໃນແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ

**ມາດຕາ 4 ເນື້ອໃນແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ**

ລັກສະນະພາຍນອກ ຂອງແບບພິມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ປະກອບມີ ຂະໜາດເຈັ້ຍ A4 (210 X 297 ມີລິແມັດ), ດ້ານໜ້າເປັນສີຂາວ, ມີເຄື່ອງໝາຍຊາດ, ຊື່ປະເທດ, ຄຳຂວັນຂອງຊາດ, ສັນຍາລັກລູກສອນຊີ້ບອກໄປທາງທິດເໜືອຂອງແຜນທີ່ປະເທດ, ຂອບເຈ້ຍເປັນສີຂຽວ ທີ່ມີລາຍເປັນສີຂາວ ຊຶ່ງມີເນື້ອໃນ ດັ່ງນີ້:

1. ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ;
2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ;
3. ເລກທີ;
4. ອອກຄັ້ງທີ;
5. ບາໂຄດ;
6. ທີ່ຕັ້ງຕອນດິນ;
7. ແຂວງ/ນະຄອນຫຼວງວຽງຈັນ;
8. ເມືອງ/ນະຄອນ;
9. ຕາແສງ;
10. ບ້ານ;
11. ໜ່ວຍ;
12. ອອກໃຫ້ແກ່;
13. ວັນເດືອນປີເກີດ, ສັນຊາດ, ອາຊີບ;
14. ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ຕາແສງ, ເມືອງ/ນະຄອນ, ແຂວງ/ນະຄອນຫຼວງວຽງຈັນ;
15. ຊື່ ແລະ ນາມສະກຸນ ຜົວ ຫຼື ເມຍ;
16. ສັນຊາດ, ອາຊີບ;
17. ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້;
18. ປະເພດທີ່ດິນປ່າໄມ້;
19. ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້;
20. ແຜນທີ່ຕາດິນເລກທີ;
21. ຕອນດິນເລກທີ, ເນື້ອທີ່ດິນ (ຕາແມັດ);
22. ມາດຕາສ່ວນ;
23. ແຜນທີ່ຕອນດິນ;
24. ອອກໃຫ້ທີ່, ວັນທີ, ເດືອນ, ປີ, ລາຍເຊັນ ແລະ ຕາປະທັບ ຂອງຫົວໜ້າຫ້ອງກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ.

ໝາຍເຫດ: ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ສະບັບນີ້ນຳໃຊ້ຢັ້ງຢືນສະເພາະຂອບເຂດ, ເນື້ອທີ່ຂອງຕອນດິນເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ນຳໄປໃຊ້ເຂົ້າໃນເປົ້າໝາຍອື່ນ.

## ໝວດທີ 4
## ການໃສ່ບາໂຄດ ແລະ ປະທັບຕາ
## ໃສ່ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ

**ມາດຕາ 7 ການໃສ່ບາໂຄດ**

ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ຕ້ອງໃສ່ບາໂຄດ ໂດຍໃຫ້ໃສ່ເບື້ອງເທິງຂໍ້ມູນຕົວເລກ ກ່ຽວກັບທີ່ຕັ້ງຕອນດິນ ຂອງໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ.

**ມາດຕາ 8 ການປະທັບຕາ**

ການປະທັບຕາ ຕ້ອງປະທັບຕາເຕັງໃສ່ລາຍເຊັນ ຂອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ກວມເອົາ ໜຶ່ງສ່ວນສາມ ຂອງລາຍເຊັນມາທາງເບື້ອງຊ້າຍ ໂດຍບໍ່ໃຫ້ທັບ ຫຼື ກວມເອົາຕຳແໜ່ງຂອງຜູ້ລົງລາຍເຊັນ, ບໍ່ໃຫ້ປະທັບຕາກ່ອນລົງລາຍເຊັນ ແລະ ບໍ່ໃຫ້ປະທັບຕາໃສ່ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ທີ່ບໍ່ມີລາຍເຊັນ. ຊື່ ແລະ ນາມສະກຸນ ຂອງຜູ້ເຊັນ ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ໃຫ້ຈ້ຳຂະໜານ ແລະ ຕັ້ງສາກັບຕຳແໜ່ງຜູ້ເຊັນ ຢ່າງຊັດເຈນ ແລະ ຊື່ຕົງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນເຈົ້າການ ສົມທົບກັບ ກົມປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ, ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 27 ມີນາ 2026 ເປັນຕົ້ນໄປ.

ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ລັດຖະມົນຕີ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ.........

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ...............

ເລກທີ:.................

# ໃບຢັ້ງຢືນ

## ການສຳຫຼວດວັດແທກທີ່ດິນ

ທີ່ຕັ້ງຕອນດິນ:...............

ແຂວງ:.........................

ເມືອງ:.........................

ຕາແສງ:.........................

ບ້ານ:..........................

ໜ່ວຍ:..........................

ອອກໃຫ້ແກ່:........................................................................................................................

ວັນເດືອນປີເກີດ:....................................... ສັນຊາດ:............................. ອາຊີບ:.........................................

ທີ່ຢູ່ປັດຈຸບັນ ບ້ານ:...................... ໜ່ວຍ:...... ເມືອງ:................. ຕາແສງ:............. ແຂວງ:..............................

ຊື່ຜົວ ຫຼື ເມຍ:....................................................................................................................

ສັນຊາດ:............................................................. ອາຊີບ:...........................................................

ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້:................................ ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້:....................................

ປະເພດທີ່ດິນປ່າໄມ້:................................................ ເຂດ:...............................................................

ແຜນທີ່ຕາດິນເລກທີ:................................................ ຕອນດິນເລກທີ:..................................................

ເນື້ອທີ່ດິນ:.............................................................. ຕາແມັດ, ມາດຕາສ່ວນ:.........................................

## <u>ແຜນທີ່ຕອນດິນ</u>




ອອກໃຫ້ທີ່ ເມືອງ:.................... ວັນທີ, ເດືອນ, ປີ:...................

**ຫົວໜ້າຫ້ອງການ**

<u>ໝາຍເຫດ</u>: ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນສະບັບນີ້ ນຳໃຊ້ຢັ້ງຢືນສະເພາະຂອບເຂດ, ເນື້ອທີ່ຂອງຕອນດິນເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ນຳໄປໃຊ້ເຂົ້າໃນເປົ້າໝາຍອື່ນ.